COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ການມີສ່ວນຮ່ວມກັບໝູ່ເພື່ອນ ແລະ ຄອບຄົວຂອງທ່ານໃນການສຳຫຼວດພົນລະເມືອງປີ 2020

*ມີຄຳຖາມບໍ? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

ການສຳຫຼວດພົນລະເມືອງຈະເລີ່ມຕົ້ນໃນເດືອນມີນາ ປີ 2020. ***ຕ້ອງແນ່ໃຈວ່າທ່ານ ແລະ ຊຸມຊົນຂອງທ່ານໄດ້ຖືກນັບຈຶ່ງຈະໄດ້ຮັບສ່ວນແບ່ງຂອງແຫຼ່ງທຶນ ແລະ ການເປັນຕົວແທນຢ່າງຍຸຕິທຳ.***

ທຸກໆ 10 ປີ, ລັດຖະບານສະຫະລັດອາເມລິກາຈະນັບທຸກຄົນທີ່ອາໄສຢູ່ໃນປະເທດສະຫະລັດອາເມລິກາ. ແບບສອບຖາມການສຳຫຼວດພົນລະເມືອງແມ່ນສັ້ນ, ແລະ ຄຳຕອບສ່ວນຕົວຂອງທ່ານແມ່ນຈະຖືກເກັບໄວ້ເປັນຄວາມລັບ.

***ທ່ານແມ່ນຜູ້ສົ່ງຂ່າວສານທີ່ດີທີ່ສຸດ, ໜ້າເຊື່ອຖືທີ່ສຸດຕໍ່ກັບໝູ່ເພື່ອນ ແລະ ຄອບຄົວຂອງທ່ານ.*** ຈົ່ງຊ່ວຍຊຸມຊົນທ່ານໂດຍການໂອ້ລົມກັບໝູ່ເພື່ອນ ແລະ ຄອບຄົວຂອງທ່ານກ່ຽວກັບການສຳຫຼວດພົນລະເມືອງ:

## ການສຳຫຼວດພົນລະເມືອງມີຄວາມສຳຄັນຕໍ່ຂ້າພະເຈົ້າເພາະວ່າ...

- ການສຳຫຼວດພົນລະເມືອງຈະຊ່ວຍໃນການກຳນົດຈຳນວນເງິນທີ່ຈະນຳໄປບໍລິການ ເຊັ່ນ: ບັນດາໂຮງຮຽນ, ໂຮງໝໍ, ແລະ ທາງດ່ວນ -- ຈຳນວນຄົນໃນຊຸມຊົນພວກເຮົາຖືກນັບຫຼາຍເພີ່ມຂຶ້ນ, ຈຳນວນເງິນທຶນຈະໄດ້ເພີ່ມຂຶ້ນເທົ່ານັ້ນ.
- ຜົນຂອງການສຳຫຼວດພົນລະເມືອງຈະກຳນົດການເປັນຕົວແທນທາງການເມືອງ, ລວມເຖິງຈຳນວນທີ່ນັ່ງໃນສະພາກ້ອງເກັ້ດທີ່ຈະໄດ້ຮັບ ແລະ ວິທີການແຕ້ມແບບບັນດາຕົວເມືອງສຳລັບລັດແບບໃດ ແລະ ລັດຖະບານທ້ອງຖິ່ນ.
- ລັດຖະບານ, ທຸລະກິດ, ແລະ ອົງການຈັດຕັ້ງຊຸມຊົນຈະໃຊ້ຂໍ້ມູນການສຳຫຼວດພົນລະເມືອງເພື່ອຈັດສັນເງິນ, ບັນດາຊັບພະຍາກອນ ແລະ ການໃຫ້ບໍລິການໃຫ້ກັບບັນດາຊຸມຊົນ ແລະ ເພື່ອຕັດສິນໃຈບ່ອນທີ່ຈະລົງທຶນ.

## ການມີສ່ວນຮ່ວມໃນການສຳຫຼວດພົນລະເມືອງແມ່ນມີຄວາມປອດໄພ

- ບັນດາຄຳຕອບການສຳຫຼວດພົນລະເມືອງຂອງພວກເຮົາແມ່ນຈະຖືກເກັບໄວ້ເປັນຄວາມລັບ. ຕາມກົດໝາຍ, ສຳນັກງານສຳຫຼວດພົນລະເມືອງຈະບໍ່ສາມາດແບ່ງປັນບັນດາຄຳຕອບຂອງພວກເຮົາໃຫ້ກັບບຸກຄົນໃດ, ລວມເຖິງໜ່ວຍງານລັດຖະບານກາງ, ລັດ, ແລະ ໜ່ວຍງານລັດຖະບານທ້ອງຖິ່ນ ຫຼື ການບັງຄັບການເຂົ້າເມືອງ.

## ການມີສ່ວນຮ່ວມການສຳຫຼວດພົນລະເມືອງເປັນແບບງ່າຍໆ.

- ໃຫ້ແນ່ໃຈວ່າການນັບທຸກຄົນທີ່ອາໄສຢູ່ໃນເຮືອນນັບແຕ່ວັນທີ 1 ເມສາ, 2020, ໂດຍບໍ່ສົນເລື່ອງຄວາມສຳພັນຂອງພວກເຂົາກັບທ່ານ! ໃນນີ້ລວມມີເດັກແດງ, ເດັກນ້ອຍ, ຍາດພີ່ນ້ອງ, ເພື່ອນຮ່ວມຫ້ອງ, ແລະ ໝູ່ເພື່ອນ, ປະຊາຊົນທັງໝົດທີ່ຖືກນັບເຂົ້າໃນການສຳຫຼວດພົນລະເມືອງ
- ທຸກໆຄົນຈະໄດ້ຮັບການເຊີນເພື່ອປ້ອນຂໍ້ມູນສຳຫຼວດທາງອິນເຕີເນັດໃນກາງເດືອນມີນາ ປີ 2020. ທ່ານສາມາດໂທສອບຖາມສຳນັກງານສຳຫຼວດພົນລະເມືອງເພື່ອໃຫ້ຄຳຕອບຜ່ານທາງໂທລະສັບ. ຖ້າທ່ານບໍ່ຕອບຜ່ານທາງອິນເຕີເນັດ ຫຼື ໂທລະສັບ, ສຳນັກງານສຳຫຼວດຈະສົ່ງແບບຟອມໃຫ້ທ່ານ
- ຖ້າທ່ານບໍ່ສາມາດຕອບການສຳຫຼວດພົນລະເມືອງ, ທາງສຳນັກສຳຫຼວດພົນລະເມືອງອາດຈະສົ່ງຜູ້ສຳຫຼວດມາທີ່ເຮືອນທ່ານເພື່ອເກັບກຳຂໍ້ມູນດ້ວຍຕົວເອງ - ດັ່ງນັ້ນ ຖ້າທ່ານບໍ່ຕ້ອງການໃຫ້ຜູ້ສຳຫຼວດມາສຳຫຼວດ, ໃຫ້ທ່ານຕອບແບບຟອມການສຳຫຼວດໃຫ້ໄວເທົ່າທີ່ສາມາດຕອບໄດ້!

ກະລຸນາຊ່ວຍພວກເຮົາເຜີຍແຜ່ກ່ຽວກັບຄວາມສຳຄັນໃຫ້ກັບທຸກຄົນເພື່ອແນ່ໃຈວ່າພວກເຮົາທຸກຄົນຖືກນັບແລ້ວສຳລັບໃນການສຳຫຼວດພົນລະເມືອງປີ 2020!

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສຳຫຼວດສຳມະໂນຄົວໄດ້ທີ່ www.CountUsIn2020.org/resources.*